ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lao Traditional Literature

## Lecture 7: Oral Stories (Con.)

**Lecturer: Somthapheuy SYVONGSAK**

**Academic Year 2023-2024**

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີພື້ນເມືອງລາວ
**ລະຫັດ:** 0907108
**ບົດທີ 3:** ພື້ນສືບ (ຕໍ່) ເວລາ: 90 ນາທີ
**ຜູ້ບັນຍາຍ:** ອຈ.ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 1
**ສົກຮຽນ:** 2023-2024

| | |
|---|---|
| **ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)** | |
| **ສ້າງເປົ້າໝາຍ (Goals):**<br>ນັກຮຽນຈະຮູ້:<br>- ເນື້ອໃນສ່ອງແສງຂອງພື້ນສືບ<br>- ສີລະປະຂອງພື້ນສືບ | |
| **ຄວາມເຂົ້າໃຈ (Understand):**<br>ນັກຮຽນຈະເຂົ້າໃຈ:<br>- ເນື້ອໃນສ່ອງແສງຂອງພື້ນສືບ<br>- ສີລະປະຂອງພື້ນສືບ | **ຄຳຖາມຫຼັກ (Questions):**<br>1) ພື້ນສືບມີເນື້ອໃນສ່ອງແສງຫຍັງແດ່?<br>2) ພື້ນສືບມີສີລະປະແນວໃດ? |
| **ຄວາມຮູ້ (Knowledge):**<br>- ໃຫ້ນັກຮຽນຮູ້ໄດ້ເຖິງເນື້ອໃນສ່ອງແສງ ແລະ ສີລະປະຂອງພື້ນສືບ. | **ທັກສະ (Skills):**<br>- ອະທິບາຍໄດ້ເຖິງ ເນື້ອໃນສ່ອງແສງ ແລະ ສີລະປະຂອງພື້ນສືບ. |
| **ຂັ້ນຕອນ 2 - ຫຼັກຖານປະເມີນ** | |
| **ໜ້າວຽກສິດສອນ (Tasks):**<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ | **ຫຼັກຖານອື່ນໆ (Other Evidence):**<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ |
| **ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)** | |
| - **ສື່ການສອນມີ:**<br>ປຶ້ມຕຳລາວິຊາວັນນະຄະດີພື້ນເມືອງລາວ, ປຶ້ມວັນນະຄະດີລາວ, ວັນນະຄະດີພື້ນເມືອງ1, ວັນນະຄະດີຊັ້ນມັດທະຍົມປີທີ4, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD, ໃບກິດຈະກຳ.<br>- **ກິດຈະກຳການຮຽນ** | |

**I. ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**
- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງການກຳເນີດ ແລະການຂະຫຍາຍຕົວຂອງພື້ນສືບ.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 3**

**ພື້ນສືບ (ຕໍ່)**

**3. ເນື້ອໃນສ່ອງແສງຂອງພື້ອນສືບ** ( 45 ນາທີ)

<u>**ກິດຈະກຳ 1:**</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ພື້ນສືບມີເນື້ອໃນສ່ອງແສງຫຍັງແດ່?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (40 ນາທີ)

**3.1 ພື້ນສືບມີເນື້ອໃນສ່ອງແສງເຖິງປະຫວັດສາດ**

ພື້ນສືບຂອງລາວເຮົາ ຖ້າສົມທຽບໃສ່ເລື່ອງເລົ່າພື້ນເມືອງອື່ນໆແລ້ວ ເຫັນວ່າມີໜ້ອຍຢູ່, ແຕ່ເນື້ອໃນຂອງມັນອຸດົມສົມບູນສົມຄວນ. ພື້ນສືບແຕ່ລະບົດຕ່າງກໍມີເນື້ອໃນສ່ອງແສງສັງຮວມກ່ຽວກັບເຫດການສຳຄັນທີ່ເກີດຂຶ້ນຢູ່ໃນບັນດາກຸ່ມຊົນເຜົ່າ ແລະ ໃນແຕ່ໄລຍະປະຫວັດສາດຂອງຊາດເຮົາ ເຊິ່ງໃນນັ້ນແມ່ນການກຳເນີດ ແລະ ຄົງຕົວຂອງເມືອງບູຮານຕ່າງໆ, ການສ້າງລັດຂອງສັກດີນາລາວເມືອງຊວາ, ການສ້າງສາພັດທະນາບ້ານເມືອງລາວ.

ຕຳນານເມືອງບູຮານບາງສະບັບ ໄດ້ບັນທຶກໄວ້ວ່າ ກ່ອນທີ່ມີການສ້າງຕັ້ງລັດສັກດີນາລາວເດີມເກີດຢູ່ເມືອງຊວາ ໂດຍມີຂຸນລໍຜູ້ສືບທອດຂຸນບູລົມເປັນຜູ້ປົກຄອງນັ້ນ ມວນຊົນລາວບັນດາເຜົ່າ ໄດ້ພາກັນຕັ້ງຖິ່ນຖານ ສ້າງບ້ານປຸກເມືອງໃຫຍ່ໆຂຶ້ນຢູ່ຫຼາຍແຫ່ງມາແລ້ວ. ບົດພື້ນສືບ " ພະຍາສີໂຄດຕະບອງ " ໄດ້ສ່ອງແສງເຖິງເຫດການທີ່ເຜົ່າລາວໄດ້ພາກັນຕັ້ງຖິ່ນຖານຢູ່ທາງພາກໃຕ້ ແລະ ພາກກາງຂອງດິນແດນລາວສະໄໝກ່ອນ. ບົດເລື່ອງໄດ້ຍ້ອງຍໍສັນລະເສີນທ້າວສີໂຄດຕະບອງເຊິ່ງໃນເບື້ອງຕົ້ນເປັນເດັກນ້ອຍທຳມະດາ, ຕໍ່ມາເມື່ອໄດ້ກິນເຂົ້າທີ່ມີສີດຳ ແລະ ໄດ້ມີໄມ້ຄ້ອນຕະບອງ ອັນເປັນອາວຸດທີ່ມີຄວາມສັກສິດແລ້ວ ກໍກາຍມາເປັນຄົນທີ່ມີກຳລັງວັງຊາອັນມະຫາສານຢ່າງມະຫັດສະຈັນທີ່ສຸດ. ທ້າວສີໂຄດຕະບອງບໍ່ສະເພາະແຕ່ມີຄວາມສາມາດຊ່ວຍຊາວບ້ານຂົນໄມ້ເປັນຫຼາຍພັນລຳແຕ່ປ່າມາບ້ານໄລຍະເວລາແຕ່ມື້ໜຶ່ງສອງມື້ເທົ່ານັ້ນ, ຫາກຍັງມີຄວາມສາມາດຜາບແພ້ສັດຕູມາຣຸກຮານ. ປົກປັກຮັກສາບ້ານເມືອງ ແລະ ຄວາມສຸກຂອງປະຊາຊົນອີກດ້ວຍ. ເມື່ອໄດ້ຂຶ້ນເປັນພະຍາປົກຄອງເມືອງແລ້ວ ທ້າວສີໂຄດຕະບອງ ຍັງໄດ້ໄປຊ່ວຍຊາວເມືອງວຽງຈັນ ປາບໝູ່ຊ້າງສານ ທີ່ກຳລັງເຂົ້າມາຮາວີບ້ານເມືອງ ແລະ ທຳລາຍໄຮ່ນາຕາກ້າ ຢ່າງມີໄຊສະຫງ່າງາມ.

ຜ່ານບົດພື້ນສືບ " ພະຍາສີໂຄດຕະບອງ " ອາດເຫັນໄດ້ວ່າເມືອງສີໂຄດຕະບອງເປັນເມືອງໜຶ່ງທີ່ໃຫຍ່ ແລະ ກຳລັງມີອຳນາດເຂັ້ມແຂງຢູ່ທາງພາກໃຕ້ຂອງແຫຼມອິນດູຈີນໃນຄາວນັ້ນ ແຕ່ວ່າເມືອງສີໂຄດຕະບອງໃນຂະນະທີ່ແຜ່

ອຳນາດປົກຄອງຕົນຂຶ້ນທາງທິດເໜືອນັ້ນ ກໍໄດ້ພົບພໍ້ກັບການສະກັດກັ້ນ ແລະ ການໂຈມຕີຈາກເມືອງອື່ນໆ ເປັນຫຼາຍຄັ້ງມາແລ້ວ, ເມືອງວຽງຈັນໃນຄາວນັ້ນ ຍັງມີອຳນາດອ່ອນນ້ອຍຫຼຸດເມືອງສີໂຄດຕະບອງຫຼາຍເທົ່າ. ພະຍາເມືອງວຽງຈັນເຫັນວ່າ ອຳນາດເມືອງສີໂຄດຕະບອງເປັນສັດຕູຕົວອັນຕະລາຍຂົ່ມຂູ່ເມືອງຂອງຕົນ.  ເມືອງວຽງຈັນບໍ່ສາມາດສະກັດກັ້ນ ການແຜ່ອຳນາດຂອງເມືອງສີໂຄດຕະບອງດ້ວຍກຳລັງແຮງດ້ານອາວຸດ, ດັ່ງນັ້ນ ຈຶ່ງໃຊ້ກົນອຸບາຍອັນເລິກແລບແນບນຽນທີ່ສຸດ ເພື່ອເອົາຊະນະອຳນາດຂອງເມືອງສີໂຄດຕະບອງ; ການເສຍຊີວິດຂອງພະຍາສີໂຄດຕະບອງໄດ້ສະແດງເຖິງໄລຍະອ່ອນເພຍ ແລະຊຸດໂຊມ ໃນການແຜ່ອຳນາດຂອງເມືອງສີໂຄດຕະບອງ ຢູ່ທາງພາກໃຕ້ອິນດູຈີນໃນຄາວນັ້ນ. ການສຳພັນລະຫວ່າງເມືອງສີໂຄດຕະບອງກັບເມືອງວຽງຈັນແມ່ນການສຳພັນແຫ່ງການຂັດແຍ່ງ ແລະບຽດຍຶດກືນກິນເຊິ່ງກັນ ແລະ ກັນ, ຕາມກົດເກນຂະຫຍາຍຕົວໄລຍະຕົ້ນຂອງສັງຄົມສັກດີນາກະແຈກກະຈາຍ.

ບົດພື້ນສືບທ້າວຈັນທະພານິດ ເປັນບົດເລື່ອງໜຶ່ງທີ່ໄດ້ສ່ອງແສງໄລຍະໃໝ່ ແຫ່ງການຂະຫຍາຍຕົວຂອງສັງຄົມລາວ. ບົດເລື່ອງມີເນື້ອໃນຍ້ອງຍໍສັນລະເສີນທ້າວຈັນທະພານິດ ຜູ້ມີບຸນຄຸນຫຼາຍໃນການປະກອບສ່ວນ ສ້າງເມືອງຊຽງດົງຊຽງທອງ ໃນໄລຍະການສ້າງຕັ້ງລັດສັກດີນາເມືອງຊວາຂຶ້ນ. ບົດເລື່ອງນີ້ຍັງສ່ອງແສງເຖິງໄລຍະຂອງສັງຄົມ ທີ່ລາວເຮົາໄດ້ມີການຂະຫຍາຍຕົວ ຢູ່ໃນລະດັບສູງສົມຄວນ, ໂດຍສະເພາະແມ່ນໃນເຂດ ນັບແຕ່ເມືອງວຽງຈັນລົງໄປການຄ້າຂາຍແລກປ່ຽນສິນຄ້າເຊິ່ງກັນ ແລະ ກັນ ໄດ້ກາຍເປັນຄວາມຮຽກຮ້ອງຕ້ອງການຂອງສັງຄົມສະໄໝນັ້ນ. ກົງກັນຂ້າມຢູ່ເມືອງຊຽງດົງຊຽງທອງ ການຂະຫຍາຍຕົວຂອງສັງຄົມພັດຍັງຕ່ຳ.

ບົດພື້ນສືບ " ຈັນທະພານິດ " ບໍ່ສະເພາະແຕ່ມີເນື້ອໃນທາງດ້ານປະຫັວດສາດ ແລະ ເນື້ອໃນທາງດ້ານສັງຄົມເທົ່ານັ້ນ ຫາກຍັງມີເນື້ອໃນສ່ອງແສງເຖິງຄວາມສວຍງາມ ແລະ ຮັ່ງມີທາງຊັບພະຍາກອນຂອງທຳມະຊາດ ຂອງເມືອງຊຽງດົງຊຽງທອງໃນເມື່ອກ່ອນ, ເຊິ່ງເປັນການດຶງດູດ. ເຕົ້າໂຮມເອົາບັນດາຊົນເຜົ່າ ແລະ ຈຸ້ມເຈື້ອເຊື້ອສາຍອື່ນໆເຂົ້າມາພ້ອມກັບຊົນເຜົ່າເດີມ ທີ່ຢູ່ຊຽງດົງຊຽງທອງ ພັດທະນາບ້ານເມືອງຄາວນັ້ນ. ບົດເລື່ອງນີ້ຍັງໄດ້ຍ້ອງຍໍສັນລະເສີນທ້າວຈັນທະພານິດ ເຊິ່ງເປັນພະຍາຜູ້ທຳອິດ ໃນພື້ນສືບຂອງລາວເຮົາ ທີ່ມີບຸນຄຸນຕໍ່ຊາວບ້ານຊາວເມືອງ ແລະ ມີທັງຜົນງານອັນໃຫຍ່ຫຼວງຄື: ໄດ້ປະກອບສ່ວນສ້າງສາເມືອງຊຽງດົງຊຽງທອງນີ້ກໍເປັນພຽງຄວາມມຸ່ງມາດປາຖະໜາ ຂອງປະຊາຊົນທີ່ຢູ່ໃນຍຸກສະໄໝຕໍ່ມາພາຍຫຼັງພີ້ເທົ່ານັ້ນ. ເພາະໃນຕົວຈິງແລ້ວ ເລື່ອງທ້າວຈັນທະພານິດ ໄດ້ເປັນພະຍາປົກຄອງເມືອງຊຽງດົງຊຽງທອງນັ້ນ ອາດໄດ້ມາຍ້ອນຄວາມຮຸນແຮງທາງດ້ານກຳລັງອາວຸດ ຫຼືດ້ວຍກຳລັງທາງດ້ານວັດຖຸສິ່ງຂອງ. ແຕ່ເຖິງຢ່າງໃດກໍຕາມ ປະຊາຊົນລາວໃນສະໄໝກ່ອນໄດ້ເຊື່ອຖືຕົວລະຄອນທ້າວຈັນທະພານິດ ເໝືອນດັ່ງບັນພະບຸລຸດຜູ້ທຳອິດ ທີ່ໄດ້ມີບຸນຄຸນຢ່າງຫຼວງຫຼາຍຕໍ່ຊາວບ້ານຊາວເມືອງ ແລະ ທັງໄດ້ເປັນຜູ້ປະກອບສ່ວນສ້າງສາເມືອງຊຽງດົງຊຽງທອງໃນສະໄໝດຶກດຳບັນອີກດ້ວຍ.

ພື້ນສືບທີ່ມີເນື້ອໃນປະຫັວດສາດ ແລະ ແຜ່ຂະຫຍາຍກວ້າງຂວາງກວ່າໝູ່ ແມ່ນເລື່ອງຂຸນບູລົມ, ກ່ອນສະຕະວັດທີ XVI ພື້ນຂຸນບູລົມຍັງເປັນບົດເລື່ອງເລົ່າສືບໆກັນມາເທົ່ານັ້ນ. ໃນສະຕະວັດທີ XVI ພະມະຫາເທບຫຼວງ ຈຶ່ງໄດ້ຮຽບຮຽງເປັນປຶ້ມຄັ້ງທຳອິດ ເຊິ່ງພວກເຮົາເຄີຍເອີ້ນວ່າ: " ໜັງສືນິທານຂຸນບູລົມ ". ໜັງສືນິທານຂຸນບູລົມນີ້ ໄດ້ຮັບການດັດແປງຫຼາຍຄັ້ງໃນສະໄໝຕ່າງກັນ, ດັ່ງນັ້ນ, ຈຶ່ງມີຫຼາຍສະບັບຕ່າງກັນ. ເນື້ອໃນຕົ້ນຕໍຂອງພື້ນຂຸນບູລົມ ແມ່ນການສ່ອງແສງເຖິງເຫດການປະຫວັດສາດອັນໃຫຍ່ຫຼວງແຫ່ງການສ້າງຕັ້ງລັດສັກດີນາຂຶ້ນ.

ໃນພື້ນສືບດັ່ງກ່າວນັ້ນ ຂຸນບູລົມນັບແຕ່ເປັນບຸກຄົນມີຈິງໃນປະຫວັດສາດ ໄດ້ຖືກຍົກຍ້ອງຂຶ້ນເປັນຕົວລະຄອນແຖນ ໂດຍຕອນໜຶ່ງໃນບົດເລື່ອງເລົ່າວ່າ: ຂຸນບູລົມເປັນລູກຊາຍຂອງພະຍາແຖນຫຼວງ ຖືກແຕ່ງຕັ້ງໃຫ້ມາປົກຄອງເມືອງລຸ່ມ ແລະ ແຖນທັງຫຼາຍ. ໃນຂະບວນຂອງຂຸນບູລົມ ນອກຈາກນາງ ເອດແຄງ ລູກສາວຂອງແຖນແຕ່ງ, ນາງຍົມພາລາ ລູກສາວຂອງແຖນຊັ່ງ ຍັງມີປູ່ເຍີແມ່ຍ່າງ່າມ, ເຖົ້າໄລ່ ແລະ ແມ່ມົດ ພ້ອມດ້ວຍແຖນອື່ນໆອີກ. ຮູບພາບດັ່ງກ່າວນີ້ ໄດ້ສ່ອງແສງເຖິງເຫດການ ທີ່ພົງສາວະດານລາວເຄີຍໄດ້ບັນທຶກໄວ້ ທີ່ເປັນເຫດການປະຫວັດສາດຂອງຊາດລາວບູຮານເຮົາຄື: ເຫດການທີ່ບັນດາເຜົ່າຊົນໄທລາວເຄື່ອນຍ້າຍເມືອງເອກ ແຕ່ທາງທິດເໜືອລົງມາທິດໃຕ້ ເຊິ່ງໃນນັ້ນມີຂຸນບູລົມ ເປັນຫົວໜ້ານຳພາທຸກໆຊົນເຜົ່າເຫຼົ່ານີ້ ພ້ອມກັນນັ້ນບົດເລື່ອງຍັງຊີ້ແຈງລ່ວງໜ້າ ເຖິງບົດບາດເປັນເຈົ້າປົກຄອງ ຂອງບັນດາເຜົ່າໄທລາວ ຢູ່ໃນຂົງເຂດໃໝ່ແຫ່ງນີ້. ຮູບພາບຕົວລະຄອນຂຸນບູລົມ ໄດ້ຖືກພັນລະນາເໝືອນດັ່ງເປັນບັນພະບຸລຸດຜູ້ຍິ່ງໃຫຍ່ ມີຄວາມຮູ້ຄວາມສາມາດເຫັນກວ້າງມອງໄກ ແລະ ເປັນຫ່ວງເປັນໃຍນຳການນຸ່ງຖື, ກິນຢູ່ຂອງຄົນເມືອງລຸ່ມ ໃນຂະບວນຂອງຂຸນບູລົມ ແຖນຫຼວງໄດ້ເອົາໃຈໃສ່ເປັນພິເສດ ປະກອບກັບບັນດາແຖນ ທີ່ເປັນນັກວິຊາການໃນທຸກດ້ານໃຫ້ ພ້ອມດ້ວຍເຄື່ອງມືຮັບໃຊ້ໃນການອອກແຮງງານ ສັດສາວາສິ່ງ ແນວປູກຂອງຝັງທຸກຊະນິດ ແລະ ຊັບສິນບັດເຄື່ອງໃຊ້ຂອງສອຍອື່ນໆອີກຢ່າງຄົບຖ້ວນ. ນີ້ໄດ້ສະແດງໃຫ້ເຫັນວ່າ ສະໄໝຕັ້ງນະຄອນຢູ່ເມືອງແຖນ, ລະບອບສັງຄົມ, ເສດຖະກິດ, ວັດທະນະທຳ ຂອງບັນດາເຜົ່າຊົນໄທລາວ ອາດມີການຂະຫຍາຍຕົວສູງສົມຄວນແລ້ວ.

ບັ້ນສຸດທ້າຍຂອງເລື່ອງໄດ້ເວົ້າເຖິງລູກຊາຍທັງ 7 ຄົນຂອງຂຸນບູລົມທີ່ໄດ້ໄປປົກຄອງ 7 ເມືອງຕ່າງກັນ, ມັນໄດ້ສ່ອງແສງເຖິງໄລຍະໃໝ່ທີ່ມວນຊົນບັນດາເຜົ່າລາວ ໄດ້ມາຕັ້ງເມືອງເອກໃສ່ເມືອງຊວາໃນເຂດຊຽງດົງຊຽງທອງ ແລະ ເມືອງອື່ນໆອີກ ໃນຂົງເຂດແຫຼມອິນດູຈີນນີ້ເຊັ່ນ: ເມືອງປະກັນ (ຊຽງຂວາງ), ເມືອງຍອນ, ເມືອງຫົງສາວະດີ.

ພື້ນຂຸນບູລົມເປັນບົດພື້ນສືບ ທີ່ມີເນື້ອໃນປະຫວັດສາດຢ່າງຈະແຈ້ງ ແລະ ເລິກເຊິ່ງກວ່າເລື່ອງອື່ນໆ ຂຸນບູລົມເປັນຕົວລະຄອນທີ່ເປັນສັນຍາລັກ ໃຫ້ແກ່ອິງກະສັດຂອງຊົນຊັ້ນສັກດີນາ ແລະ ຜູ້ຂຽນກໍເປັນນັກປາດທາງສາດສະໜາ ທີ່ຕິດພັນຢ່າງສະນິດແໜ້ນກັບຊົນຊັ້ນສັກດີນາ, ສະນັ້ນ, ພື້ນຂຸນບູລົມທີ່ຂຽນໄວ້ກ່ອນ ໃນສະຕະວັດທີ XVI ນັ້ນຈຶ່ງມີລັກສະນະສັກດີນາ ແລະ ມີສີສັນຂອງສາສະນາພຸດຢ່າງຈະແຈ້ງ.

ໃນສະໄໝບູຮານເມື່ອມະນຸດໄດ້ຂະຫຍາຍຕົວ ກ້າວໄປເຖິງລະບອບສັງຄົມ ຕາມຈຸ້ມເຈື້ອເຊື້ອສາຍ ຫຼື ຍັງເປັນແຕ່ລະກຸ່ມຊົນເຜົ່າໃຜມັນ. ສະຕິເປັນເຈົ້າຕົນເອງ ແລະ ສະຕິກ່ຽວກັບຜົນປະໂຫຍດລວມຂອງທັງໝົດທຸກໆກຸ່ມຊົນເຜົ່າ ກໍເກີດຂຶ້ນ ແລະ ຂະຫຍາຍຕົວໄປນຳ, ເພື່ອປົກປັກຮັກສາສິດທິຜົນປະໂຫຍດລວມດັ່ງກ່າວນັ້ນ ແລະ ກໍເພື່ອແຜ່ອຳນາດການປົກຄອງຂອງຕົນໃຫ້ກວ້າງຂວາງກວ່າເກົ່າ ລະຫວ່າງກຸ່ມຊົນຕ່າງໆ ຈຶ່ງເຄີຍມີການປະທະກັນ ແລະ ສູ້ຮົບຕົບຕີເຊິ່ງກັນ ແລະ ກັນຢູ່ສະເໝີ.

ບົດພື້ນສືບບາງສະບັບ ໄດ້ພັນລະນາສົງຄາມອັນດຸເດືອດ. ຂ້ຽວຂາດ ແລະ ຍືດເຍື້ອຍາວນານລະຫວ່າງຂຸນເຈືອງຜູ້ປົກຄອງນະຄອນເງິນຍາງ ເມືອງຊຽງແສນ ກັບທ້າວແອງກາ ຜູ້ເປັນເຈົ້າຢູ່ເມືອງປະກັນ(ຊຽງຂວາງ). ອັນເນື່ອງມາຈາກການທີ່ທັງສອງຝ່າຍຕ່າງກໍ່ຍາດກັນຂໍໂອມເອົານາງງ້ອມ ລູກສາວຂອງຂຸນເຈືອງ. ໃນສົງຄາມຄັ້ງນີ້ ຝ່າຍຂຸນເຈືອງຜູ້ອົງອາດສາມາດຍາດເອົາຊະນະໄດ້ໃນເບື້ອງຕົ້ນ. ແຕ່ໃນທີ່ສຸດເລີຍຖືກຝ່າຍແອງກາ ທີ່ໄດ້ຮັບການຊ່ວຍເຫຼືອຈາກເມືອງອື່ນໆນັ້ນ ຕ່າວໂຈມຕີຈົນປະລາໄຊໄປ.

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ໃນບົດເລື່ອງ " ຕະຍິກຮານ " ແລະ ບົດເລື່ອງ " ແກ້ແຄ້ນຂຸນເຈືອງ " ໄດ້ພັນລະນາເຖິງການທີ່ຂຸນເຈືອງ ໄດ້ບັນຊາກອງທັບຂອງຕົນ ຕໍ່ຕ້ານການໂຈມຕີຂອງຝ່າຍກົງກັນຂ້າມ ເພື່ອປົກປ້ອງຄວາມເປັນເຈົ້າຂົງເຂດຕົນເອງ. ໃນການຕໍ່ສູ້ນີ້ ເຖິງແມ່ນວ່າຂຸນເຈືອງ ພ້ອມດ້ວຍໄພ່ພົນທະຫານຈະຖືກປະລາໄຊກໍ່ຕາມ. ແຕ່ປະຊາຊົນໄດ້ພັນລະນາຂຸນເຈືອງເປັນວິລະບຸລຸດທີ່ເກັ່ງກ້າສາມາດ, ອົງອາດກ້າຫານ ບໍ່ຍອມຈຳນົນຕໍ່ສັດຕູ. ພາຍຫຼັງທີ່ເສຍສະຫຼະໄປໃນສະໜາມຮົບ ແລ້ວຜີຂຸນເຈືອງ ຍັງນຳພາກອງທັບຜີຂອງຕົນໄປຕີພະຍາແຖນ ຢູ່ເມືອງຟ້າຈົນໄດ້ຮັບໄຊຊະນະ. ໃນບົດເລື່ອງເຫຼົ່ານີ້ ຂຸນເຈືອງຍາມໃດກໍສະຫງ່າຜ່າເຜີຍ, ເຊື່ອໝັ້ນຕໍ່ກຳລັງແຮງ ແລະ ຄວາມສາມາດຂອງຕົນ. ບົດເລື່ອງໄດ້ເລົ່າວ່າຂຸນເຈືອງມີ " ຄຸດ " ອັນເປັນເຄື່ອງຄ້ຳຂອງຄູນ ແລະ ດວງດາບອັນສັກສິດທີ່ສຸດ. ທັງສອງຝ່າຍຕໍ່ສູ້ກັນດ້ວຍລິດເດດອັນມະຫັດສະຈັນ" ຂຸນເຈືອງພຽງແຕ່ຍົກດາບຂຶ້ນກໍສາມາດເຮັດໃຫ້ສັດຕູຕາຍໄປເປັນພັນເປັນໝື່ນຄົນ ".

ເພື່ອສະແດງເຖິງນ້ຳໃຈບໍ່ຍອມຈຳນົນຕໍ່ສັດຕູຂອງຂຸນເຈືອງ ບົດເລື່ອງໄດ້ພັນລະນາການປະລາໄຊ ແລະ ການຕາຍຂອງຂຸນເຈືອງ ດ້ວຍຫຼາຍສາເຫດແຕກຕ່າງກັນຄື: ຍ້ອນຂຸນເຈືອງເປັນຄົນມັກກິນເຫຼົ້າ ເມົາຢາ ແລະ ສະແຫວງຫາແຕ່ຜູ້ແສ້ຜູ້ສາວ, ຍ້ອນໝິ່ນປະໝາດ ແລະ ຖືເບົາຕໍ່ສັດຕູ, ຂາດສະຕິລະວັງຕົວ ໂດຍສະເພາະ ຍ້ອນເມຍຂອງຂຸນເຈືອງ ໄດ້ເອົາສິ້ນເກົ່າມາປົກ " ຄຸດ " ຂອງຂຸນເຈືອງ, ເຮັດໃຫ້ຄວາມສັກສິດຂອງມັນເສຍໄປ ແລະ ຍ້ອນດວງດາບທີ່ສັກສິດຂອງຂຸນເຈືອງ ບໍ່ສາມາດຜາບແພ້ແມ່ຍິງ ທີ່ພວມຖືພາໄດ້. ໃນທີ່ສຸດ ເຖິງແມ່ນວ່າຂຸນເຈືອງຖືກປະລາໄຊ ຢູ່ໃນສະໜໍລະພູມເມືອງລຸ່ມແລ້ວກໍຕາມ, ແຕ່ບົດເລື່ອງຍັງພັນລະນາຂຸນເຈືອງເປັນຜູ້ມີໄຊຄື ວິນຍານຂອງຂຸນເຈືອງ ໄດ້ຕີເອົາຊະນະພະຍາແຖນຢູ່ເມືອງຟ້າ. ຮູບພາບຂອງຂຸນເຈືອງຜູ້ມີໄຊນັ້ນ ໄດ້ຈາລຶກໃນຄວາມຊົງຈຳທີ່ເຕັມໄປດ້ວຍຄວາມຮັກ, ຄວາມຫວັງ ແລະ ຄວາມເຊື່ອໝັ້ນຂອງປະຊາຊົນຕະຫຼອດມາ.

ເນື້ອໃນຂອງບົດພື້ນສືບ ຍັງສ່ອງແສງເຖິງການປະດິດສ້າງ ດ້ານວັດທະນະທຳອັນເກົ່າແກ່ ລືຊື່ ແລະ ມະຫັດສະຈັນຂອງລາວເຮົາຄື: ບົດເລື່ອງກ່ຽວກັບປະຫວັດສາດການສ້າງໄຫຫີນຢູ່ແຂວງຊຽງຂວາງ, ປະຫວັດການປະດິດສ້າງຄ້ອງບັ້ງ, ຕຳນານກ່ຽວກັບພະບາງ, ຕຳນານກ່ຽວກັບພະທາດຫຼວງ ເຫຼົ່ານີ້ເປັນຕົ້ນ.

ຕົວລະຄອນຂຸນເຈືອງ ບໍ່ສະເພາະແຕ່ໄດ້ຮັບການຍ້ອງຍໍສັນລະເສີນ ເໝືອນດັ່ງວິລະບຸລຸດຜູ້ອົງອາດກ້າຫານ ແລະ ບໍ່ຍອມຕໍ່ສັດຕູເທົ່ານັ້ນ, ຫາກຍັງເປັນນັກປະດິດສ້າງດ້ານວັດທະນະທຳອັນເກົ່າແກ່ຂອງຊາດເຮົາອີກດ້ວຍ. ນັກຄົ້ນຄວ້າວັດຖຸບູຮານທັງຫຼາຍ ເຄີຍຕີລາຄາຢ່າງເປັນເອກະສັນກັນວ່າ ໄຫຫີນ ທີ່ເຫັນຢູ່ຊຽງຂວາງໃນປັດຈຸບັນນີ້ ແມ່ນໝາກຜົນແຫ່ງການປະດິດສ້າງວັດທະນະທຳບູຮານ ທີ່ມີຄຸນຄ່າທາງດ້ານປະຫວັດສາດ ແລະ ສິລະປະ, ປະຊາຊົນໄດ້ປະດິດແຕ່ງພື້ນສືບຫຼາຍບົດ ກ່ຽວກັບທົ່ງໄຫຫີນເຫຼົ່ານີ້. ໃນປຶ້ມພົງສາວະດານລາວ ທ່ານມະຫາສິລາ ວິລະວົງ ໄດ້ຂຽນໄວ້ວ່າ " ຂຸນເຈືອງໄດ້ເມືອງປະກັນແລ້ວ ຈຶ່ງທຳການສະຫຼອງໄຊ ຢູ່ເມືອງປະກັນເຖິງ 7 ເດືອນ, ໃນການສະຫຼອງໄຊຄັ້ງນີ້ ຂຸນເຈືອງໄດ້ຈັດໃຫ້ທຳໄຫເຫຼົ້າ ລ້ຽງໄພ່ພົນເປັນອັນມາກ ". ຢູ່ໃນເລື່ອງອື່ນໆຍັງເວົ້າວ່າ: ໄຫຫີນແມ່ນໄຫເຫຼົ້າຂອງພວກກຶມມຸກິນດື່ມກັນໃນພິທີສິ່ງສະການບັນດາໄພພົນທະຫານ ທີ່ເສຍຊີວິດໃນສົງຄາມ ດັ່ງນັ້ນ ທົ່ງໄຫຫີນຈຶ່ງແມ່ນເຂດປ່າຊ້າຂອງເຜົ່າກຶມມຸໃນສະໄໝກ່ອນ (ສະໄໝເຄື່ອງຫີນ) (ບໍ່ແສງຄຳ ວົງດາລາ ແລະຄະນະ, 1987).

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

**3.2 ພື້ນສືບມີເນື້ອໃນສ່ອງແສງເຖິງການປະດິດສ້າງ ວັດຖຸບູຮານ ແລະ ສິລະປະວັນນະຄະດີ ອັນເກົ່າແກ່ ( ວັນນະສິນ )**

ຊາດລາວແມ່ນຊາດໜຶ່ງທີ່ມີມູນເຊື້ອ ວັດທະນະທໍາ, ຮີດຄອງປະເພນີ ແລະ ສິລະປະວັນນະຄະດີ ທີ່ອຸດົມສົມບູນ ແລະ ຮັ່ງມີ. ວັດຖຸບູຮານຫຼາຍສິ່ງຫຼາຍຢ່າງທີ່ໄດ້ຖືກປະດິດສ້າງ ສີໄມ້ລາຍມືອັນປານີດບັນຈົງຂອງຄົນລາວມາແຕ່ບູຮານ. ພື້ນສືບກໍແມ່ນສ່ວນໜຶ່ງທີ່ໄດ້ບັນທຶກສ່ອງແສງເຖິງການປະດິດສ້າງວັດທະນະທໍາອັນເກົ່າແກ່ລືຊື່ ແລະ ມະຫັດສະຈັນຂອງຄົນລາວເຊັ່ນ: ການສ້າງໄຫຫີນທີ່ຊຽງຂວາງ, ການປະດິດສ້າງຄ້ອງບັ້ງ, ການສ້າງພະບາງ, ການສ້າງພະທາດຫຼວງ, ການສ້າງທາດອີງຮັ່ງ, ການສ້າງທາດສີໂຄດຕະບອງ, ການສ້າງວັດວາອາຮາມ...

ມີບາງເອກະສານໄດ້ສັນນິຖານວ່າ ໄຫຫີນທີ່ຢູ່ຊຽງຂວາງນັ້ນແມ່ນໄຫເຫລົ້າເຈືອງ. ຕາມປື້ມພົງສາວະດານລາວຂອງມະຫາສີລາ ວີລະວົງ ທີ່ພິມໃນປີ 1957 ນັ້ນກໍໄດ້ຂຽນວ່າ: ພາຍຫຼັງຊະນະພວກແກວ ແລະ ຍຶດໄດ້ເມືອງປະກັນແລ້ວ ຂຸນເຈືອງຈຶ່ງໄດ້ສະຫຼອງໄຊຢູ່ເມືອງປະກັນເຖິງ 7 ເດືອນ, ໃນການສະຫຼອງໄຊຄັ້ງນີ້ຂຸນເຈືອງໄດ້ຈັດໃຫ້ເຮັດໄຫເຫຼົ້າລ້ຽງໄພ່ພົນໂຍທາ, ດັ່ງນັ້ນ, ຈຶ່ງຖືກັນວ່າ ໄຫຫີນຢູ່ຊຽງຂວາງແມ່ນ ໄຫເຫຼົ້າເຈືອງຕໍ່ມາຈົນເທົ້າທຸກວັນນີ້.

ຄ້ອງບັ້ງກໍແມ່ນຄ້ອງວັດຖຸບູຮານຊະນິດໜຶ່ງ ທີ່ມີຄຸນຄ່າສູງດ້ານປະຫັວດສາດວັດທະນະທໍາ ແລະ ມີສິລະປະອີກດ້ວຍ ມີນັກຄົ້ນຄ້ວາຫຼາຍຄົນ ໄດ້ສັນນິຖານວ່າ ແມ່ນສີໄມ້ລາຍມືເປັນເຜົ່າກຶມມຸ ເມື່ອເວົ້າເຖິງການປະດິດສ້າງຄ້ອງບັ້ງໃນນິດເລື່ອງ" ຕາຍິ່ກຣານ " ຂອງເຜົ່າກໍາມຸໄດ້ອະທິບາຍວ່າ ຕະຍິກຣານຢູ່ເຮືອນເອົານ້ອງໃນຂະນະທີ່ພໍ່ແມ່ພ້ອມດ້ວຍໄທບ້ານໄປເຮັດວຽກ ລາວຊອກເຫັນກ້ອນຂີ້ສູດທີ່ພໍ່ແມ່ປະໄວ້ຢູ່ກ້ອງຕຽງ ເລີຍເອົາມາປັ້ນເປັນຄ້ອງບັ້ງ (ຄ້ອງມະໂຫລີລະທຶກ) ແລ້ວຕີຂຶ້ນສຽງກ້ອງດັງສະໜັ່ນຫັ່ວນໄຫວໄປເຖິງພໍ່ແມ່ ແລະ ຊາວບ້ານທີ່ກໍາລັງເຮັດວຽກຢູ່ນັ້ນ ເຂົາເຈົ້າເລີຍຄິດວ່າຢູ່ທາງບ້ານຕ້ອງມີເລື່ອງອັນຕະລາຍເກີດຂຶ້ນຈຶ່ງພາກັນຟ້າວແລ່ນມາເມື່ອເຫັນຊາວບ້ານ ແລະພໍ່ແມ່ແລ່ນກັບມາ "ຕະຍິກຣານ" ກໍຟ້າວບີບຄ້ອງບັ້ງຂອງຕົນໃຫ້ເປັນກ້ອນຂີ້ສູດໄວ້ຄືເກົ່າ ຜ່ານຫຼາຍເທື່ອຄືແນວນັ້ນ, ມື້ໜຶ່ງຜູ້ເປັນພໍ່ແມ່ເລີຍລັກລີ້ຈອບເບິ່ງ ເມື່ອເຫັນເຫດການຕົວຈິງແລ້ວເຂົາເຈົ້າຈຶ່ງເອົານໍາມວກຫົດໃສ່ຄ້ອງບັ້ງໜ່ອຍນັ້ນໃນທີ່ສຸດຄ້ອງບັ້ງຂີ້ສູດກໍກາຍເປັນຄ້ອງບັ້ງແທ້. ແຕ່ນັ້ນມາຄອບຄົວຂອງຕະຍິ່ກຣານກໍເລີຍມີຄ້ອງບັ້ງ…

ໃນປັດຈຸບັນນີ້ ຄ້ອງບັ້ງສໍາລັບເຜົ່າກຶມມຸບໍ່ສະເພາະເປັນມູນມໍລະດົກທີ່ມີຄຸນຄ່າສູງເທົ່ານັ້ນ ຫາກຍັງຖືເປັນສິ່ງສັກສິດ ແລະ ສັກກະລະບູຊາອີກດ້ວຍ. ໃນສະໄໝບູຮານຄ້ອງບັ້ງ ມີພາລະບົດບາດຫຼາຍຢ່າງຕໍ່ເຜົ່າກໍາມຸ ເຊັ່ນ: ຕີຄ້ອງບັ້ງໃນພິທີສະຫຼອງໄຊ ໃນມື້ບຸນວັນງານ ຕີຄ້ອງບັ້ງເພື່ອເປັນສັນຍານເຕົ້າໂຮມກໍາລັງ,ໃນສຽງຄ້ອງບັ້ງເພື່ອປຸກລະດົມຊຸກຍູ້ນໍາໃຈສູ້ຮົບ, ນໍ້າໃຈເຊື່ອໝັ້ນຕໍ່ໄຊສະນະຂອງຕົນ ແລະ ກໍມີແຕ່ສຽງຄ້ອງບັ້ງສິ່ງດຽວເທົ່ານັ້ນທີ່ມີຄວາມສາມາດນໍາສິ່ງແນວຄິດຈິດໃຈ ແລະ ຄວາມມຸ່ງມາດ ປາດຖະໜາຂອງຄົນເຮົາ ໄປໃຫ້ຜີພໍ່ແມ່ ຜີຟ້າແຖນຮູ້ໄດ້.

ດາບທັງເປັນເຄື່ອງມືຮັບໃຊ້ໃນການອອກແຮງງານ ແລະ ທັງເປັນອາວຸດທີ່ມີຜົນສັກສິດໃນການສູ້ຮົບໃນສະໄໝກ່ອນ. ດາບຂອງຂຸນເຈືອງ ໄດ້ຖືກຍົກຍໍຂຶ້ນເປັນອາວຸດທີ່ມີຄວາມສັກສິກທີ່ສຸດ ຂອງຟ້າ ຂອງແຖນ.ດວງດາບອັນວິເສດວິໂສນັ້ນໄດ້ຕິດພັນກັບຜົນງານ ແລະ ເປັນສິ່ງຕັດສິນຊີ້ຂາດເຖິງໄຊຊະນະ ຫຼື ຄວາມປະລາໄຊ ໃນການສູ້ຮົບຂອງຂຸນເຈືອງ. ເມື່ອດາບດວງນັ້ນເສຍຄວາມສັກສິດໄປແລ້ວ ຂຸນເຈືອງກໍ່ບໍ່ມີລິດເດດໄດ້ອີກ ຈຶ່ງຈໍາຕ້ອງຍອມຕາຍຕໍ່ໜ້າສັດຕູ.

ກິດຈະການວັດວາອາຮາມ ແລະ ເຈດີໃຫຍ່ແຫ່ງຕ່າງໆ ຂອງປະຊາຊົນເຮົາສະໄໝກ່ອນ ກໍໄດ້ຖືກນໍາມາເລົ່າເປັນບົດເລື່ອງທີ່ມີລັກສະນະເຫຼືອເຊື່ອ ແລະ ມະຫັດສະຈັນອັນເປັນໜ້າຈັບໃຈທີ່ສຸດ. ບົດເລື່ອງເຫຼົ່ານີ້ ເຖິງວ່າຕິດພັນກັບການເຊື່ອຖືທາງສາສະໜາ ໂດຍສະເພາະແມ່ນທາງສາສະໜາພຸດກໍຕາມ ແຕ່ມັນກໍໄດ້ສະແດງເຖິງຄວາມຮູ້ຄວາມສາມາດໃນການປະດິດສ້າງທາງດ້ານວັດທະນະທໍາສິລະປະອັນມະຄະດີອັນເກົ່າແກ່ ແລະ ລືຊື່ຂອງຊາດເຮົາ (ພູວົງ ໜໍ່ດາລາ ແລະຄະນະ, 2018).

**4. ສິລະປະຂອງພື້ນສືບ.** (15 ນາທີ)

***ກິດຈະກໍາ 2:***

- ຄູຕັ້ງຄໍາຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕໍາລາ
  1) ພື້ນສືບມີສິລະປະແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກໍາ: (10 ນາທີ)

ສິລະປະຂອງພື້ນສືບ ມີລັກສະນະເວົ້າໂຍກ ແລະ ເສີມສ້າງດ້ວຍຕົວລະຄອນທີ່ມີຊີວິດຊີວາ ເພື່ອໃຫ້ຜູ້ອ່ານ, ຜູ້ຟັງຈັບອົກຈັບໃຈ ແລ້ວຈື່ຈໍາເຫດການຂອງຕົວລະຄອນໃນເລື່ອງໄດ້ດົນ ເພື່ອນໍາມາເລົ່າສືບຕໍ່ກັນໄປ.

ຜູ້ແຕ່ງໄດ້ໃຊ້ສິລະປະການແຕ່ງ ໂດຍຍົກຍ້ອງບັນດາຕົວລະຄອນໃນພື້ນສືບທຽບເທົ່າກັບຟ້າແຖນທັງຫຼາຍເຮັດໃຫ້ພື້ນສືບມີລັກສະນະສັກສິດ, ມະຫັດສະຈັນ. ອັນເປັນການຍົກບົດບາດຂອງເຈົ້າຂຸນມູນນາຍໃນສັງຄົມໃຫ້ສູງ ແລະ ມີຄວາມສັກສິດ. (ອ່ອນແກ້ວ ນວນນະວົງ ແລະຄະນະ, 2008).

ສິລະປະຂອງພື້ນສືບ ແມ່ນຮູບການປະດິດແຕ່ງແບບເລົ່າ-ຈົດຈໍາຄວາມອັດສະລິຍະໃນຕົວບຸກຄົນ, ບໍ່ມີການບັນທຶກດ້ວຍລາຍລັກອັກສອນ ໄດ້ຮັບສິລະປະການປະດິດແຕ່ງຈາກເທບນິຍາຍຄື: ການພັນລະນາເຫດການ ແລະຕົວລະຄອນແບບເຫຼືອເຊື່ອມະຫັດສະຈັນເປັນຕົ້ນ.

ສິລະປະພື້ນສືບ ແມ່ນສິລະປະເວົ້າໂຍກ, ດ້ວຍຮູບການເສີມບົດບາດ, ຄວາມສາມາດ ຫຼື ຄວາມວິຈິດພິດສະດານ ຢ່າງສູງສົ່ງ ເຊິ່ງນອກເໜືອຈາກມະນຸດທໍາມະດາທົ່ວໄປ.

ສິລະປະພື້ນສືບ ແມ່ນວິທີການຍົກຍ້ອງຕົວລະຄອນໃນປະຫວັດສາດ ດ້ວຍການແຕ່ງເຕີມຈົນສາມາດໃຫ້ຜູ້ອ່ານຜູ້ຟັງ ມີຄວາມເຫຼື້ອມໃສ, ເຄົາລົບເຊື່ອຟັງຕໍ່ບັນພະບູລຸດ ຫຼື ບັນພະຊົນຂອງຕົນ.

ສິລະປະເວົ້າໂຍກໃນພື້ນສືບ ແມ່ນວິທີການຍົກຍ້ອງຕົວລະຄອນໃຫ້ເທົ່າເທົ່າທຽມກັບພວກແຖນໃນສວງສະຫວັນ, ເຮັດໃຫ້ຕົວລະຄອນມີລັກສະນະສັກສິດ, ມະຫັດສະຈັນ ເຊິ່ງເປັນການຍົກສູງຖານະບົດບາດຂອງບັນພະຊົນ ຫຼື ບັນພະບູລຸດດ ກະສັດຜູ້ປົກຄອງ ຫຼື ຜູ້ນໍາທ້ອງຖິ່ນໃຫ້ສູງເດັ່ນຂຶ້ນໃນສັງຄົມ ໂດຍອີງຕາມລະບົບແນວຄິດຂອງສາສະໜາ ແລະຄວາມເຊື່ອຖືໃນຍຸກສະໄໝນັ້ນ.

ເວົ້າລວມແລ້ວ, ການປະດິດແຕ່ງແບບເວົ້າໂຍກ ແມ່ນຮູບການພັນລະນາໃນວັນນະຄະດີພື້ນເມືອງລາວ. ວິທີການເວົ້າໂຍກນີ້ມີຫຼາຍປະເທດນິຍົມໃຊ້. ອາດເວົ້າໄດ້ວ່າ: ການເວົ້າໂຍກແມ່ນຮູບການໂນ້ມນ້າວຈິດໃຈ ເພື່ອໃຫ້ຜູ້ອ່ານ ແລະຜູ້ຟັງມີຄວາມປະທັບໃຈ ຢາກຟັງ ແລະຢາກເລົ່າໃຫ້ໄດ້ (ບຸນລ້ອມ ສີບຸນເຮືອງ ແລະຄະນະ, 2014).

**III. ຂັ້ນສະຫຼຸບ**

- **ຄູເນັ້ນຈຸດສໍາຄັນຂອງບົດຮຽນ**
  - ເນື້ອໃນສ່ອງແສງຂອງພື້ນສືບ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

- ສິລະປະຂອງພື້ນສືບ

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄໍາຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄໍາຕອບ ແລະ ສະຫຼຸບຄືນ

**V. ຂັ້ນຕັກເຕືອນ**

- ຄູແນະນໍານັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

**ເອກະສານອ້າງອີງ**

ບໍ່ແສງຄໍາ ວົງດາລາ ແລະຄະນະ. (1987). ວັນນະຄະດີລາວ. ກະຊວງສຶກສາທິການ. ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ.

ບຸນລ້ອມ ສີບຸນເຮືອງ ແລະຄະນະ. (2014). ແບບຮຽນວັນນະຄະດີ ຊັ້ນມັດທະຍົມສຶກສາປີທີ 5. ກະຊວງສຶກສາທິການ ແລະກິລາ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ພູວົງ ໜໍ່ດາລາ ແລະຄະນະ. (2018). ວັນນະຄະດີພື້ນເມືອງ. ຄະນະສຶກສາສາດ. ມະຫາວິທະຍາໄລ ສຸພານຸວົງ.

ອ່ອນແກ້ວ ນວນນະວົງ ແລະຄະນະ. (2008). ແບບຮຽນວັນນະຄະດີຊັ້ນມັດທະຍົມສຶກສາ ປີທີ ສີ່. ກະຊວງສຶກສາທິການ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ຄູສອນປະຈໍາວິຊາ



ປທ. ສົມທະເພີຍ ສີວົງສັກ